# San Diego Unified School District

EUGENE BRUCKER EDUCATION CENTER (619) 725-5506
4100 Normal Street, San Diego, CA 92103-2682

**Carl A. Cohn**
Superintendent of Schools

ເດືອນຕຸລາ, **2007**

ເຖິງພໍ່ແມ່ /ຜູ້ປົກຄອງນັກຮຽນທີ່ນັບຖື,

ຂໍຂອບໃຈ ທີ່ໃຫ້ການສຶກສາແກ່ເດັກຂອງທ່ານ ຢູ່ທີ່ບ້ານ ເປັນສິ່ງຮີບດ່ວນກວ່າຫມູ່ ໃນປີນີ້. ຂ້າພະເຈົ້າມີຄວາມດີໃຈທີ່ສຸດທີ່ທ່ານໃຫ້ຄວາມໄວ້ເນື້ອເຊື່ອໃຈແກ່ໂຮງຮຽນ ແລະ ສູນກາງສຶກສາຂອງພວກເຮົາ. ຂ້າພະເຈົ້າຢາກຂໍໃຫ້ທ່ານຮູ້ວ່າຜົນສຳເຣັດຂອງເດັກທ່ານຢູ່ໃນໂຮງຮຽນ ແລະ ຄວາມພໍໃຈຂອງທ່ານກັບໂຮງຮຽນຂອງພວກຂ້າພະເຈົ້ານັ້ນເປັນສິ່ງສຳຄັນທີ່ສຸດຂອງພວກຂ້າພະເຈົ້າ.

ດັ່ງທີ່ໄດ້ກ່າວມາເມື່ອເດືອນກ່ອນນັ້ນ, ເມື່ອມໍ່ໆມານີ້ ການສຳຣວດພໍ່ແມ່ນັກຮຽນສູນກາງສຶກສາແຊນດີເອໂກ ມີຫລາຍກວ່າ **90** ເປີເຊັນໃຫ້ຄະແນນສູງ ວ່າໂຮງຮຽນມີຄວາມປອດພັຍດີ, ສະອາດ, ໃຫ້ຄວາມເຄົາຣົບແກ່ພໍ່ແມ່, ໃຫ້ຄວາມຍຸຕິທຳແກ່ພວກນັກຮຽນ, ແລະ ຄວາມສຳຄັນອື່ນໆຄື ມີຄຸນນະພາບດີ. ແປດສິບແປດເປີເຊັນ ພໍ່ແມ່ມີຄວາມພໍໃຈຕໍ່ຄວາມສຳເຣັດຂອງເດັກເຂົາເຈົ້າຢູ່ໃນໂຮງຮຽນ ແລະ, ຍ້ອນການຊ່ອຍເຫລືອຂອງທ່ານນັ້ນ, ເຂົາເຈົ້າຍິ່ງມີຄວາມສຳເຣັດຫລາຍຂຶ້ນ. ສົກຮຽນປີນີ້ພວກຂ້າພະເຈົ້າຕັດສິນໃຈຈະເຮັດຫນ້າທີ່ດ້ວຍຄວາມອົດທົນເພື່ອປັບປຸງການບໍຣິການຊ່ວຍເຫລືອທ່ານ.

ພວກຂ້າພະເຈົ້າມີຄວາມດີໃຈທີ່ທ່ານເປັນນາຍຄຣູຄົນທຳອິດ ແລະ ຄົນສຳຄັນທີ່ສຸດຂອງເດັກທ່ານ. ທ່ານສາມາດໃຫ້ເດັກຂອງທ່ານຮຽນກ້າວຫນ້າຢູ່ໃນໂຮງຮຽນໄດ້ ໂດຍຈັດບ່ອນງຽບສງົບໃຫ້ເດັກຮຽນຢູ່ທີ່ບ້ານ – –ໃຫ້ມີແສງໄຟພຽງພໍໃນເວລາເຮັດບົດຮຽນການບ້ານ, ເວລາອ່ານ ແລະ ຂຽນ. ການປິດທໍຣະທັດໄວ້ຈົນກວ່າເຮັດບົດຮຽນການບ້ານສຳເຣັດ ແລະ ຈຳກັດການເບິ່ງທໍຣະທັດນັ້ນ ແມ່ນມີເຫດຜົນດີ. ພວກນັກຮຽນເບິ່ງທໍຣະທັດນ້ອຍຮຽນດີກວ່າພວກນັກຮຽນທີ່ເບິ່ງທໍຣະທັດຫລາຍສອງຊົ່ວໂມງຕໍ່ມື້. ແທນທີ່ຈະເຮັດຢ່າງອື່ນນັ້ນ, ທ່ານສາມາດໃຊ້ເວລາອ່ານປື້ມ, ອ່ານຫນັງສືພິມ ແລະ ອ່ານນິທານທີ່ຫນ້າສົນໃຈຮ່ວມກັນ, ໃຫ້ເດັກອ່ານສູ່ທ່ານຟັງ, ແລະໂອ້ລົມມ່ວນຊື່ນກັບເລື້ອງທີ່ທ່ານໄດ້ອ່ານມາ. ກິຈກັມເຫລົ່ານີ້ບອກໃຫ້ຮູ້ວ່າ ການອ່ານນັ້ນມີຄວາມສຳຄັນຢ່າງຍິ່ງສຳຫລັບທ່ານ.

ການທຳຄວາມຮູ້ຈັກກັບນາຍຄຣູຂອງເດັກນັ້ນ ເປັນວິທີດີເລີດອັນນຶ່ງ ທີ່ຈະໄດ້ຕິດຕໍ່ໂອ້ລົມ ແລະ ເຂົ້າໃຈວ່າເດັກຂອງທ່ານຮໍ່າຮຽນແນວໃດ. ຄໍ່າຄືນການກັບເຂົ້າໂຮງຮຽນຂອງສະມາຄົມພໍ່ແມ່ນັກຮຽນແລະຄຣູ ນີ້ຈະເປັນໂອກາດອັນດີໃຫ້ທ່ານໄດ້ສົນທະນາໂອ້ລົມກັບຄຣູ. ຂໍໃຫ້ໃຊ້ເວລາພົບພໍ້ກັບຄຣູ ແລະ ຂໍເອົາຮ່າງຫ້ອງວິຊາຮຽນ ຫລືບັນຊີການຮຽນທີ່ຄຣູວາງແຜນສອນສຳຫລັບປີນີ້. ຂ້າພະເຈົ້າຂໍຊຸກຍູ້ໃຫ້ທ່ານເຂົ້າຮ່ວມສະມາຄົມພໍ່ແມ່ນັກຮຽນແລະຄຣູ (**PTA**) ແລ້ວຍັດແຍງເອົາໂອກາດອັນດີເລີດ ເພື່ອເຂົ້າຮ່ວມການສຶກສາຮໍ່າຮຽນຂອງເດັກໃນສົກຮຽນປີນີ້. ຄອບຄົວທີ່ສນັບສນູນໂຮງຮຽນຂອງເດັກ ແລະ ເຂົ້າຮ່ວມຢ່າງຈິງຈັງໃນກິຈກັມຕ່າງໆຂອງໂຮງຮຽນນັ້ນ ເປັນການບອກຂ່າວສຳຄັນໃຫ້ຄົນຮູ້ ວ່າການສຶກສາດີຄືຣາງວັນອັນລ້ຳຄ່າ ແລະ ມີຄວາມພຍາຍາມນີ້ກໍຄຸ້ມຄ່າດີ.

ຂໍ້ຄົ້ນຄວ້າສະແດງໃຫ້ຮູ້ວ່າພວກເດັກທີ່ກິນເຂົ້າຮ່ວມພາກັບພໍ່ແມ່ປະຈຳນັ້ນ ຮຽນຢູ່ໃນໂຮງຮຽນໄດ້ດີກວ່າພວກທີ່ບໍ່ໄດ້ກິນເຂົ້າຮ່ວມກັບພໍ່ແມ່ປະຈຳ. ເຫດຜົນສຳຄັນກໍຄື ເຂົາເຈົ້າມີການສົນທະນາປາສັຍອັນດີຢູ່ໃນພາເຂົ້ານັ້ນ. ສູ່ມື້ນີ້ເດັກນ້ອຍຂອງພວກເຮົາຮຽນດີຫລາຍ. ຊັກຊວນເຂົາເຈົ້າໂອ້ລົມສູ່ທ່ານຟັງກ່ຽວກັບເລື້ອງນີ້.

ດ້ວຍຄວາມນັບຖືຢ່າງສູງ,

**Carl A. Cohn**
**Superintendent of Schools**

**BECOMING AMERICA'S BEST**

*XK., 09-17-07, Superintendent letter for October 2007 / Lao Version*